**ມິຊຊາອາທິດທີ 1 ກຳນົດພຣະກຣິສຕະຄົມປີ A**

**ວັນທີ 27 ພະຈິກ 2022**



**ພຣະວໍລະສານໂດຍນັກບຸນມັດເທວ 24, 37-44**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບພວກລູກສິດວ່າ: ໃນສະໄໝນໍແອເປັນແນວໃດ, ເວລາບຸດມະນຸດສະເດັດມາກໍຈະເປັນດັ່ງນັ້ນ. ຍ້ອນວ່າ ກ່ອນເກີດນ້ຳວິນາດນັ້ນ, ມະນຸດພາກັນກິນດື່ມແລະແຕ່ງງານກັນຈົນຮອດເວລາທີ່ນໍແອເຂົ້າໄປໃນສຳເພົາ ແລະນ້ຳວິນາດໄດ້ມາກວາດເອົາພວກເຂົາໄປໂດຍບໍ່ຮູ້ເນື້ອຕົວຢ່າງໃດ, ບຸດມະນຸດກໍຈະສະເດັດມາຢ່າງນັ້ນ. ເວລານັ້ນຊາຍສອງຄົນໃນທົ່ງນາ ຜູ້ໜຶ່ງຈະຖືກເອົາໄປ ແລະອີກຜູ້ໜຶ່ງຈະຖືກປະໄວ້. ໃນຈຳນວນຍິງສອງຄົນທີ່ກຳລັງໂມ້ແປ້ງ, ຜູ້ໜຶ່ງຈະຖືກເອົາໄປ ແລະອີກຜູ້ໜຶ່ງຈະຖືກປະໄວ້.

ດັ່ງນີ້, ຈົ່ງເຝົ້າລະວັງ ຍ້ອນພວກເຈົ້າບໍ່ຮູ້ວັນໃດພຣະອົງເຈົ້າຂອງພວກເຈົ້າຈະສະເດັດກັບມາ. ຈົ່ງຮູ້ໄວ້ເຖີດວ່າ ຖ້າເຈົ້າເຮືອນຮູ້ຈັກວ່າເວລາໃດຜູ້ຮ້າຍຈະມາ, ແນ່ນອນລາວຈະຕື່ນເຝົ້າແລະຈະບໍ່ປະໃຫ້ຜູ້ຮ້າຍເຈາະຝາເຮືອນລາວໄດ້. ພວກເຈົ້າກໍດັ່ງດຽວກັນ: ຈົ່ງຕຽມພ້ອມສະເໝີ ຍ້ອນວ່າບຸດມະນຸດຈະສະເດັດມາໃນເວລາພວກເຈົ້າບໍ່ນຶກບໍ່ຝັນນັ້ນແລ້ວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຫລັງຈາກອາທິດສຸດທ້າຍຂອງປີພິທີກຳ, ພວກເຮົາກໍກ້າວເຂົ້າສູ່ປີພິທີກຳໃໝ່ໃນບັນຍາກາດແຫ່ງການລໍຖ້າເຫດການສຳຄັນທີ່ຈະເປັນມາ ອັນແມ່ນການສະເດັດກັບມາຂອງພຣະເຢຊູກຣິສໂຕເຈົ້າ. ເວລາແຫ່ງການລໍຖ້ານີ້ພຣະກຣິສຕະຈັກຮຽກວ່າ: "ກຳນົດພຣະກຣິສຕະຄົມ". ເປັນຊ່ວງເວລາສີ່ອາທິດກ່ອນວັນພຣະເຢຊູເຈົ້າບັງເກີດຫລືບຸນໂນແອນນັ້ນເອງ. ແນ່ນອນ, ເມື່ອພວກເຮົາລໍຖ້າຮັບສະເດັດບຸກຄົນສຳຄັນໃດໜຶ່ງທີ່ຈະມາຢ້ຽມຢາມ, ພວກເຮົາຕ້ອງມີການກະກຽມຮອບດ້ານ: ບໍ່ວ່າຈະເປັນການຕຽມພ້ອມຝ່າຍບຸກຄົນກໍຄືຝ່າຍການຈັດຕັ້ງສັງຄົມ, ບໍ່ວ່າຈະເປັນການຕຽມພ້ອມເລື່ອງສະຖານທີ່ ກໍຄືເລື່ອງອາຫານການກິນ. ຍິ່ງໄປກວ່ານັ້ນ, ຜູ້ທີ່ຈະສະເດັດມາຢ້ຽມຢາມພວກເຮົານີ້ບໍ່ແມ່ນບຸກຄົນສຳຄັນຢູ່ໃນໂລກນີ້ ແຕ່ແມ່ນບຸດພຣະເຈົ້ານັ້ນເອງ. ພຣະອົງມາເພື່ອຢູ່ນຳພວກເຮົາຍ້ອນພຣະອົງແມ່ນແອມມານູແອນ. ພຣະອົງມາເພື່ອໄຖ່ກູ້ພວກເຮົາອອກຈາກການເປັນຂ້ອຍທາດຂອງບາບຂອງຄວາມຕາຍຍ້ອນພຣະອົງມີນາມຊື່ວ່າ: ເຢຊູ, ໝາຍວ່າພຣະຜູ້ໄຖ່ກູ້.

ດັ່ງນັ້ນ, ວັນອາທິດທີໜຶ່ງແຫ່ງກຳນົດພຣະກຣິສຕະຄົມນີ້ ວາຈາພຣະເຈົ້າຈຶ່ງຮຽກເອີ້ນພວກເຮົາໃຫ້ຕື່ນເຝົ້າແລະກຽມພ້ອມຢູ່ສະເໝີ. ຍ້ອນພວກເຮົາບໍ່ຮູ້ຈັກວັນເວລາທີ່ພຣະອົງຈະສະເດັດກັບມາ. ການກຽມພ້ອມນີ້ບໍ່ໝາຍວ່າການກຽມພ້ອມທາງນອກ ແຕ່ເປັນການກຽມພ້ອມດ້ານຈິດໃຈຂອງພວກເຮົາ. ດັ່ງທີ່ນັກບຸນເປົາໂລກ່າວໃນບົດອ່ານທີສອງວັນອາທິດນີ້ວ່າ: ເຖິງເວລາແລ້ວພວກເຮົາຕ້ອງຕື່ນນອນ, ຕ້ອງປະຖິ້ມວຽກງານທີ່ຢູ່ໃນຄວາມມືດອັນແມ່ນສິ່ງບໍ່ດີນາໆປະການ, ເພື່ອມານຸ່ງຫົ່ມອາພອນແຫ່ງຄວາມສະວ່າງອັນແມ່ນນຸ່ງຫົ່ມພຣະເຢຊູກຣິສໂຕເຈົ້ານັ້ນເອງ. ຍ້ອນພຣະອົງເປັນຄວາມສະວ່າງແລະຄວາມຈິງ. ພຣະອົງມາເພື່ອຊ່ວຍພວກເຮົາໃຫ້ພົບກັບຄວາມສະວ່າງແລະຄວາມຈິງຂອງຊີວິດ. ຫລືເວົ້າອີກຢ່າງ, ໃຫ້ພວກເຮົາປະຖິ້ມສິ່ງທີ່ເປັນຂອງໂລກ, ຄວາມມັກໄດ້ຝ່າຍເນື້ອໜັງ ເພື່ອຫັນມາຫາສິ່ງທີ່ສັກສິດອັນຈະນຳພວກເຮົາໄປພົບກັບອົງແຫ່ງຄວາມສັກສິດຄືພຣະເຢຊູກຣິສໂຕເຈົ້າທີ່ຈະສະເດັດມາຫາພວກເຮົາໃນໝໍ່ໆນີ້.

ຂໍໃຫ້ວາຈາພຣະເຈົ້າວັນນີ້ປຸກລຸກຈິດໃຈພວກເຮົາໃຫ້ຕື່ນຈາກການນອນຫລັບຝ່າຍຊີວິດຈິດ ເພື່ອຈະມີສະຕິຕຽມພ້ອມຮັບການສະເດັດມາຂອງພຣະເຢຊູເຈົ້າໃນຊີວິດຂອງພວກເຮົາ.

**ພາວະນາ**

ໂອພຣະເຢຊູເຈົ້າ, ອົງແອມມານູແອນ ໂຜດສະເດັດມາເຖີດ, ເພື່ອລູກຈະໄດ້ຢູ່ກັບພຣະອົງ ແລະພຣະອົງຢູ່ກັບລູກ. ຍ້ອນພຣະອົງມີນາມຊື່ວ່າ: "ແອມມານູແອນ". ພຣະເຈົ້າຢູ່ກັບພວກເຮົາ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ